## ສິດທິດ້ານທີ່ພັກອາໄສທີ່ເປັນທັມສໍາລັບຜູ້ລອດຊີວິດຈາກຄວາມຮຸນແຮງໃນຄອບຄົວ

### ສິ່ງນີ້ໄດ້ເກີດຂຶ້ນກັບທ່ານບໍ່?

- ເຈົ້າຂອງເຮືອນເຊົ່າຂອງທ່ານປະຕິເສດທີ່ຈະໃຫ້ທ່ານເຊົ່າເຮືອນເນື່ອງຈາກທ່ານເປັນ ຫຼື ເຄີຍເປັນເຫຍື່ອຂອງຄວາມຮຸນແຮງໃນຄອບຄົວ ຫຼື ເນື່ອງຈາກ ທ່ານໄດ້ຮັບການຊ່ວຍເຫຼືອດ້ານຄ່າເຊົ່າເຮືອນຈາກ ກະຊວງປະຊາສົງເຄາະຣັຖອໍຣີກອນ (DHS) ຫຼື ອົງການອື່ນ;
- ທ່ານໄດ້ຮັບການບອກກ່າວວ່າ ທ່ານຕ້ອງຈ່າຍຄ່າ ເສັຽຫາຍຕໍ່ຊັບສິນທີ່ເກີດຈາກຜູ້ຂົ່ມເຫັງທ່ານ;
- ເຈົ້າຂອງເຮືອນເຊົ່າປະຕິເສດທີ່ຈະໃຫ້ທ່ານປ່ຽນ ລັອກກຸນແຈຂອງທ່ານທັນທີ ຫຼື ບໍ່ອະນຸຍາດ ໃຫ້ທ່ານປ່ຽນກຸນແຈລັອກ;
- ເຈົ້າຂອງເຮືອນເຊົ່າຂອງທ່ານປະຕິເສດທີ່ຈະປົດປ່ອຍທ່ານອອກຈາກສັນຍາ ຫຼື ຂໍ້ຕົກລົງການເຊົ່າ;
- ໃບສະໝັກເຊົ່າອາພາດເມັນທ໌ຂອງທ່ານຖືກປະຕິເສດເນື່ອງຈາກການເປັນເຫຍື່ອຂອງຄວາມຮຸນແຮງໃນຄອບຄົວສະແດງໃຫ້ເຫັນຢູ່ໃນປະຫວັດອາຊະຍາກັມ;
- ເຈົ້າຂອງເຮືອນເຊົ່າຂອງທ່ານນໍາໃຊ້ນະໂຍບາຍວ່າດ້ວຍ “ການບໍ່ອົດທົນ” ຕໍ່ອາຊະຍາກັມເພື່ອຂັບໄລ່ທ່ານເນື່ອງຈາກທ່ານເປັນເຫຍື່ອຂອງຄວາມຮຸນແຮງໃນຄອບຄົວ;
- ທ່ານຖືກຂັບໄລ່ອອກເນື່ອງຈາກທ່ານໄດ້ໂທຫາຕໍາຫຼວດຊໍ້າໆ ເນື່ອງຈາກຄວາມຮຸນແຮງໃນຄອບຄົວ ແລະເພື່ອນບ້ານກໍໄດ້ຟ້ອງ.




ໃນຖານະຜູ້ລອດຊີວິດຈາກການຂົ່ມເຫັງໃນຄອບຄົວ, ການຂົ່ມເຫັງທາງເພດ ຫຼື ການເຝົ້າຕິດຕາມເບິ່ງ, ທ່ານມີສິດທີ່ຈະອາໄສຢູ່ໃນບ່ອນທີ່ທ່ານຕ້ອງການໂດຍບໍ່ຖືກຈໍາແນກຕໍ່ຕ້ານ. ເຈົ້າຂອງເຮືອນເຊົ່າບໍ່ສາມາດປະຕິບັດຕໍ່ທ່ານຢ່າງແຕກຕ່າງອັນເນື່ອງມາຈາກທ່ານເປັນ ຫຼື ໄດ້ເປັນເຫຍື່ອຂອງຄວາມຮຸນແຮງໃນຄອບຄົວ, ການຂົ່ມເຫັງທາງເພດ ຫຼື ການເຝົ້າຕິດຕາມ.

### ທ່ານສາມາດເຮັດຫຍັງໄດ້ແດ່?

- ເກັບຮັກສາເອກະສານທັງໝົດ - ບັນທຶກ, ແຈ້ງການ, ໃບຮັບ, ຂໍ້ຄວາມໃນໂທຣະສັບ, ຂໍ້ມູນຕິດຕໍ່, ຈົດໝາຍ, ອື່ນໆ.
- ຖ່າຍຮູບບັນຫາ ຖ້າຫາກວ່າເຮັດໄດ້.
- ເອົາຊື່ ແລະຈໍານວນຄົນທີ່ກ່ຽວຂ້ອງ.
- ເກັບຕົວເລກ - ວັນທີເກີດເຫດການ, ທີ່ຢູ່ບ່ອນທີ່ເກີດເຫດການ, ຄ່າໃຊ້ຈ່າຍຕ່າງໆ.
- ລົມກັບເພື່ອນບ້ານ - ມີໃຜອີກແດ່ທີ່ກ□າລັງປະສົບກັບບັນຫານີ້? ໃຜເຫັນເຫດການແດ່?




**ສະພາດູແລທີ່ພັກອາໄສທີ່ເປັນທັມຂອງຣັຖອໍຣີກອນຢູ່ນີ້ເພື່ອຊ່ວຍເຫຼືອ ທ່ານ!**

ຖ້າຫາກທ່ານຄິດວ່າ ທ່ານໄດ້ປະເຊີນໜ້າກັບການຖືກຈໍາແນກ, ຫຼື ຖ້າວ່າ ທ່ານຕ້ອງການຂໍ້ມູນຕື່ມກ່ຽວກັບສິດທິຂອງທ່ານ, ທ່ານສາມາດໂທຣສາຍໂທຣດ່ວນຂອງພວກເຮົາໄດ້ທີ່ **1-800-424-3247**, ຕໍ່ 2, ຫຼື ຢ້ຽມຊົມເວັບໄຊຂອງ ພວກເຮົາທີ່ **www.fhco.org**.

ຄວາມປອດພັຍຂອງທ່ານເປັນສິ່ງສໍາຄັນທີ່ສຸດ. ຖ້າຫາກທ່ານຖືກຂົ່ມເຫັງ – **ໂທຣ 911** ເພື່ອຮັບການຊ່ວຍເຫຼືອ.



ສະພາດູແລທີ່ພັກອາໄສທີ່ເປັນທັມ (FHCO) ແມ່ນອົງການ ເພື່ອສິດທິພົນລະເມືອງທີ່ **ບໍ່ແມ່ນຂອງຣັຖບານ** ແລະ ບໍ່ສະແຫວງຫາຜົນກໍາໄລຊຶ່ງໃຫ້ການຮັບໃຊ້ໃນຣັຖອໍຣີກອນ.

EQUAL HOUSING OPPORTUNITY

ວຽກທີ່ເປັນພື້ນຖານສໍາລັບການຕີພິມນີ້ແມ່ນໄດ້ຮັບການສະໜັບສະໜູນຈາກກອງທຶນພາຍໃຕ້ທຶນຊ່ວຍເຫຼືອຂອງກະຊວງດູແລທີ່ພັກອາໄສແລະການພັດທະນາເມືອງຂອງສະຫະຣັຖອາເມລິກາ. ເນື້ອໃນແລະວຽກນີ້ແມ່ນອຸທິດໃຫ້ແກ່ສາທາລະນະ. ຜູ້ແຕ່ງແລະຜູ້ພິມຮັບຜິດຊອບແຕ່ພຽງຜູ້ດຽວຕໍ່ຄວາມຖືກຕ້ອງຂອງຂໍ້ຄວາມແລະການຕີຄວາມທີ່ບັນຈຸຢູ່ໃນສິ່ງຕີພິມນີ້. ການຕີຄວາມດັ່ງກ່າວບໍ່ຈໍາເປັນຕ້ອງສະທ້ອນເຖິງຄວາມຄິດເຫັນຂອງຣັຖບານກາງ.

**ມີຂໍ້ມູນການບໍລິການສະໜອງໃຫ້ໃນຮູບແບບອື່ນ ແລະມີບໍລິການແປພາສາ.**